# ການນຳໃຊ້
# ຢາວັກຊິນໄຂ້ບວມ

## ນິຍາມ:

ວັກຊິນຊະນິດນີ້ ປຸງແຕ່ງມາຈາກທາດເບື່ອ ຂອງເຊື້ອ *CLOTRIDIUM CHAUVOEI* ເຊິ່ງປູກໃນພູມທີ່ບໍ່ມີອາກາດ ແລະດັດແກ້ທາດເບື່ອດ້ວຍຟອກໂມນ. ເປັນວັກຊິນເຊື້ອຕາຍຊະນິດນ້ຳ ປະກອບດ້ວຍອາລຸຍມີນຽມ ໄຮດຣົກຊາຍເຈນ ເປັນສານເສີມພະລັງ.

## ລັກສະນະອາການ

ສັດ ເຊັ່ນ : ງົວຄວາຍ, ແກ້, ແບ້ ມັກຕາຍ, ມີອາການໄຂ້ສູງ, ໄຂ່ຕາມກ້າມຊີ້ນ, ບ່າໄລ່, ກະໂພກບິບເບິ່ງບ່ອນໄຂ່ນີ້ຈະໄດ້ຍິນສຽງດັງ ຂອງຟອດອາກາດ. ສັດຈະຕາຍພາຍໃນ 5 ຫາ 6 ຊົ່ວໂມງ.




## ຂໍ້ແນະນຳ:

ໃຊ້ປ້ອງກັນພະຍາດໄຂ້ບວມ ງົວ, ຄວາຍ, ແກະ, ແບ້

- ງົວ, ຄວາຍ ອາຍຸ 6 ເດືອນຂຶ້ນໄປ.
- ແກະ, ແບ້ ອາຍຸ 3 ເດືອນຂຶ້ນໄປ.

## ວິທີໃຊ້:

- ສັ່ນໃຫ້ລະລາຍກ່ອນໃຊ້.
- ງົວ, ຄວາຍສັກ 3 ມລ.
- ສັກຫຼືບໜັງ.



- ແກະ, ແບ້ ສັກ 2 — 3 ມລ.
- ສັກຫຼືບໜັງ. ຫຼັງຈາກສັກຢາຈະມີອາການໄຄ່ເລັກນ້ອຍຢູ່ຕາມບໍລິເວນບ່ອນສັກຢາ ພາຍໃນໄລຍະ 2 — 3ມື້.





## ໄລຍະຄຸ້ມກັນ:

ສັດຈະຄຸ້ມກັນ ພາຍຫຼັງສັກຢາໄດ້ 2 ອາທິດ ແລະ ຄຸ້ມກັນພະຍາດໄດ້ 1 ປີ.

## ການເກັບຮັກສາ:

ຮັກສາໃນອຸນນະພູມ 4 ອົງສາ. ກຸ້ມໄດ້ 1 ປີ  ເວລາຂົນຍ້າຍວັກຊິນ ຫຼີກເວັ້ນບໍ່ໃຫ້ຖືກແສງແດດ ແລະ ອຸນນະພູມອົບເອົ້າເກີນໄປ.

## ແກ້ວບັນຈຸ: ແກ້ວໜຶ່ງບັນຈຸ 100 ມລ / 30 ເຂັມ.

ຕາຕະລາງ : ການນຳໃຊ້ຢາວັກຊິນ ໄຂ້ບວມ

| ຊະນິດຢາວັກຊິນ | ອາຍຸສັດຕ້ອງໃຊ້ | ວິທີໃຊ້ | ໄລຍະຄຸ້ມກັນ |
|---|---|---|---|
| • ຢາວັກຊິນ ໄຂ້ບວມ | • ໃຊ້ກັບ ງົວ, ຄວາຍ (ອາຍຸ 6 ເດືອນ ຂຶ້ນໄປ).<br>• ແກະ, ແບ້ (ອາຍຸ 3 ເດືອນ ຂຶ້ນໄປ). | • ງົວ, ຄວາຍ (ສັກ 3 ມລ. ແລະ ສັກຫຼີ້ບໜັງ)<br>• ແກະ, ແບ້ (ສັກ 2—3 ມລ . ສັກຫຼືບໜັງ). | 1 ປີ |

**Laos Extension for Agriculture Project**
**P.O. Box 9159**
**Vientiane, Lao P.D.R.**

ກອງສົ່ງເສີມກະສິກຳ ແລະ ປ່າໄມ້ ແຫ່ງຊາດ
ພະແນກສົ່ງເສີມ ແລະ ຄຸ້ມຄອງໂຄງການ

# ການນຳໃຊ້

# ຢາວັກຊິນໄຂ້ບວມ



ຄັດຈາກ:  ປຶ້ມຄູ່ມືການນຳໃຊ້ວັກຊິນສຳລັບສັດ (1997)

ຮຽບຮຽງໂດຍ :

ໜ່ວຍງານຝຶກອົບຮົມສົ່ງເສີມ ຂັ້ນສູນກາງ (*CETDU*)

ສະໜັບສະໜູນໂດຍ :

ໂຄງການ ສົ່ງເສີມ ກະສິກຳ (*LEAP*)